# ຄຳແນະນຳ ທັງ ພຣະຄັມພີຂອງພຣະເຈົ້າ

## ໜັງສືເຣື່ອງ ຕົ້ນເດີມ (ປະຖົມມະການ)

ໃຈຄວາມສຳຄັນ : ການຄັດເລືອກ

ຂໍ້ຄວາມສຳຄັນ : ໑:໑

ຈຳນວນບົດ : ໕໐ ບົດ

ຜູ້ຂຽນ : ທ່ານໂມເຊ

໑. ຄຳນຳ :

ໜັງສືເຫລັ້ມນີ້ບອກວ່າ ພຣະເຈົ້າໄດ້ຊົງນິຣະມິດສ້າງສັພສິ່ງທັງປວງ (ໂຍຮັນ ໑:໑–໓) ຄືຕັ້ງແຕ່ບົດຕົ້ນໄປໄດ້ເວົ້າເຣື່ອງການສ້າງໂລກ ເຖິງບົດສຸດທ້າຍຂອງໜັງສືນີ້ໄດ້ເວົ້າເຣື່ອງຂອງທ່ານໂຍເຊັບ ຈຶ່ງມີຣະຍະເວລາ ໒໐໐໐ ປີ

໒. ວ່າດ້ວຍຕົ້ນເດີມຂອງສິ່ງຕ່າງໆ :

໑. ວ່າດ້ວຍນ້ຳ ແລະ ແຜ່ນດິນໂລກ (ບົດ ໑:໑–໔໕)

໒. ວ່າດ້ວຍຊາດມະນຸດ (ບົດ ໑:໒໖–໒:໒໕)

໓. ວ່າດ້ວຍວັນຢຸດພັກ (ບົດ ໒:໒)

໔. ວ່າດ້ວຍການເອົາກັນເປັນຜົວເມັຍ (ບົດ ໒:໒໔–໒໕)

໕. ວ່າດ້ວຍ ບາບ ແລະ ຄວາມຕາຍ (ບົດ ໓)

ຝ. ວ່າດ້ວຍຄຳສັນຍາ ແລະ ຄວາມພົ້ນບາບ (ບົດ ໓:໑໔)
ກ. ວ່າດ້ວຍພາສາຕ່າງ ໆ (ບົດ ໑໑)
ຊ. ວ່າດ້ວຍຊາດເຮັບເຣີ (ບົດ ໑໘–ບົດ ໕໐)
ຒ. ວ່າດ້ວຍຄວາມຊອບທັມ (ບົດ ໑໕:໖)
໑໐. ວ່າດ້ວຍການເທາະອົ້ນໄປສວັນ (ບົດ ໕:໒໔)

ມ. ໃຈຄວາມຂອງໜັງສືນີ້ ກໍຄືສແດງອຳນາດແລະເປັນຄວາມມະຫາຣາຊາຂອງພຣະເຈົ້າທີ່ມີຕໍ່ມະນຸດສໂລກ

ເຖິງວ່າມະນຸດບໍ່ເຊື່ອຟັງພຣະເຈົ້າ ຈຶ່ງຕົກຢູ່ໃນບາບ, ພຣະເຈົ້າກໍຍັງຊົງໂຜດເມດຕາພວກເຂົາໂດຍຊົງຈັດແຈ່ງທາງແຫ່ງຄວາມພົ້ນໃຫ້

໔. ໜັງສືນີ້ຍັງໄດ້ສແດງເຣື່ອງຂອງຄົນໄວ້ດັ່ງນີ້:

ອາດາມແມ່ນຄົນແຣກທີ່ທຳບາບ
ກາອິນແມ່ນຄົນແຣກທີ່ຂ້າຄົນ
ອາເບນແມ່ນຄົນແຣກທີ່ຖືກຂ້າ
ໂນເອແມ່ນຜູ້ເທສນາເຣື່ອງຄວາມຊອບທັມ
ເຫນົກແມ່ນຄົນທີ່ບໍລິສຸດຄົນແຣກ
ອັບລາຮາມແມ່ນພໍ່ຂອງຄົນທີ່ເຊື່ອທັງຫລາຍ
ອີຊາກຜູ້ໄດ້ເກີດຕາມຄຳສັນຍາຂອງພຣະເຈົ້າ
ຢາໂຄບແມ່ນພໍ່ຂອງພວກ ໑໒ ຕະກູນ
ໂຢເຊັບແມ່ນຜູ້ມີໄຊຊນະ ແລະໄດ້ຮັບບຳເໜັດ

໕. ເມື່ອເວລາອ່ານ ພຣະຄັມພີເດີມ ຈະເຫັນວ່າ ພຣະເຈົ້າ ຊົງເຫັນດີໃຫ້ມີ (ຮູບເງົາ) ຕ່າງໆ

ທີ່ອ້າງເຖິງພຣະຄຣິດຢູ່ທົ່ວໄປຄື :

ກ. ປົດ ມ:໑໕ ເຊື້ອສາຍຂອງຜູ້ຍິງ ຄືອົງພຣະຄຣິດຜູ້ຈະມີໄຊຊະນະຕໍ່ພຣະຍາມານ

ຂ. ປົດ ໔:໔ ການເອົາເລືອດຂອງອາເບນ ຖວາຍບູຊາ ແມ່ນການປະກາດເຖິງລູກແກະຂອງພຣະເຈົ້າ. ພຣະເຈົ້າຊົງຖືວ່າອາເບນເປັນຜູ້ຊອບທັມ ເພາະຄວາມເຊື່ອໃນເລືອດນັ້ນ (ອ່ານ ເຮັບເຣີ ໑໑:໔; ໑໒:໒໔)

ຄ. ປົດ ໒໒ ທ່ານອັບລາຮາມໄດ້ເອົາອີຊາກຖວາຍໃຫ້ແກ່ພຣະເຈົ້າເພື່ອເປັນເຄື່ອງບູຊາ ກໍປຽບເຖິງເຄື່ອງບູຊາຂອງພຣະເຢຊູຄຣິດເອງ ຄືວ່າ ອີຊາກ ເປັນລູກໂທນ ລາວໄດ້ແບກຟືນ ລາວໄດ້ມີຊີວິດຢູ່ ປຽບເໝືອນດັ່ງເປັນຄືນມາຈາກຕາຍ (ເຮັບເຣີ ໑໑:໑໙)

ວ່າດ້ວຍໂຢເຊັບ :

ງ. ໂຢເຊັບເປັນຄືຮູບ ກິຣິຍາ ແລະກິຈການຂອງພຣະເຢຊູ

໑ ເປັນລູກທີ່ພໍ່ຮັກຫລາຍ

໒. ຖືກໃຊ້ໃຫ້ໄປຫາພວກອ້າຍ

ມ. ຖືກພວກອ້າຍຂາຍໃຫ້ປະເທດເອຢິບ

໔. ຖືກບັງຄັບໃຫ້ເປັ່ນທາດ

໕. ໄດ້ຕໍ່ສູ້ການທົດລອງ

໖. ໄດ້ຢູ່ກັບຄົນໂທດສອງຄົນ

໗. ເປັ່ນຜູ້ຊ່ອຍພວກແຫ່ງຕົນ

໘. ໄດ້ຍົກໂທດຂອງພວກອ້າຍ

## ໓. ບົດສຳຄັນ :

ບົດ ໑ ການນິຣະມິດສ້າງ

,, ໓ ມະນຸດຕົກໃນບາບ

,, ໔ ເຣື່ອງກາອິນ ແລະອາເບນ

,, ໖–໙ ນ້ຳຖ້ວມໂລກ

,, ໑໑ ຫໍບາເບນ

,, ໑໒ ພຣະເຈົ້າຊົງເອີ້ນເອົາອັບລາຮາມ

,, ໑໗ ເມືອງຊໍດົມຖືກທຳລາຍ

,, ໒໒ ອັບລາຮາມຖວາຍອີຊາກແກ່ພຣະເຈົ້າ

,, ໒໔ ອີຊາກເອົາເມັຍ

,, ໒໘ ຄຳຜັ່ນຂອງຢາໂຄບ

,, ໓໒ ຢາໂຄບຕໍ່ສູ້ກັບທູດສວັນ

,, ໓໗ ໂຍເຊັບຖືກພວກອ້າຍຂາຍໄປປະເທດເອຢິບ

ກ. ການແບ່ງເປັນພາກ:

ພາກ ໑ ວ່າດ້ວຍຕົ້ນເດີມຂອງສິ່ງຕ່າງ ໆ (ບົດ ໑–໑໑)

໑. ຕັ້ງແຕ່ການສ້າງໂລກເຖິງການຕົກໃນບາບ (ບົດ ໑–໓)

໒. ຕັ້ງແຕ່ການຕົກໃນບາບເຖິງເວລານ້ຳຖ້ວມໂລກ (ບົດ ໔–໗)

໓. ຕັ້ງແຕ່ນ້ຳຖ້ວມໂລກເຖິງຫໍບາເບນ (ບົດ ໖–໑໑)

ພາກທີ ໒ ວ່າດ້ວຍປວັດພໍ່ເດີມ (ບົດ ໑໒–໕໐)

໑. ເຣື່ອງຂອງທ່ານອັບລາຮາມ (ບົດ ໑໒–໒໕)

໒. ເຣື່ອງຂອງທ່ານອີຊາກ (ບົດ ໒໑–໒໘)

໓. ເຣື່ອງຂອງທ່ານຢາໂຄບ (ບົດ ໒໗–໓໖)

໔. ເຣື່ອງຂອງທ່ານໂຢເຊັບ (ບົດ ໓໘–໕໐)